# ສປປລາວ: ໕ປີ ຜ່ານມາ, ໑໒໒ ອົງການ ຈັດຕັ້ງ ທົ່ວໂລກ ທວງຖາມ ຢາກ ຊາບວ່າ ທ່ານ "*ສົມບັດ ຢູ່ໃສ?*"

ວັນທີ ໑໕ ທັນວາ ເປັນ ວັນຄົບຮອບ ໕ປີ ແຫ່ງ ການຫາຍສາບສູນ ແບບຖືກບັງຄັບ ຂອງ ຜູ້ນຳອົງການ
ສັງຄົມພົລະເຮືອນ ທີ່ ສປປລາວ, ທ່ານ ສົມບັດ ສົມພອນ. ໃນນາມ ອົງການ ການຈັດຕັ້ງ ທີ່ໄດ້ລົງນາມ ເຊັນຮ່ວມ, ພວກຂ້າພະເຈົ້າ ຂໍ ສະແດງ ຄວາມບໍ່ເພິ່ງພໍໃຈ ຕໍ່ ການທີ່ ທາງການ ສປປລາວ ບໍ່ສາມາດ ສືບສວນ ເຖິງການ ຫາຍສາບສູນ ຂອງ ທ່ານ ສົມບັດໄດ້ ຢ່າງ ເອກະຣາດ, ທ່ວງທັນ ໂດຍ ປະສິດຕິພາບ ແລະ ໂປ່ງໃສ, ພ້ອມຍັງບໍ່ ສາມາດ ເປີດເຜີຍ ເຖິງ ສະຖານທີ່ ຄຸມຂັງ ທ່ານ ສົມບັດ ແລະ ບໍ່ ສາມາດ ສົ່ງຕົວ ຂອງ ທ່ານ ຄືນສູ່ ທາງຄອບຄົວອີກ.

ການມິດງຽບ ຢ່າງຕໍ່ເນື່ອງ ຂອງ ລັຖະບານ ສປປລາວ ແລະ ການບິດເບືອນ ຄວາມຈິງ ກ່ຽວແກ່ ກໍຣະນີ ທ່ານ ສົມບັດ ນີ້, ໄດ້ເຮັດໃຫ້ ທາງ ຄອບຄົວຕົກ ຢູ່ໃນ ຄວາມຍ້ານກົວ ມາໄດ້ ໕ປີ ແລ້ວ, ພ້ອມຍັງເຮັດໃຫ້ ທາງຄອບຄົວ ບໍ່ ຊາບເຖິງ ຊາຕາກັມ ແລະ ຂ່າວໄດເລີຍ ຂອງ ທ່ານ ສົມບັດ ຈົນເຖິງວັນນີ້.

ທ່ານສົມບັດໄດ້ປະກົດຕົວ ເປັນຄັ້ງສຸດ ເມື່ອຕອນແລງ ຂອງວັນທີ ໑໕ ທັນວາ ໒໐໑໒, ທີ່ ປ້ອມຍາມ ຕຳລວດ ທີ່ຖະນົນ ອັນມີຜູ້ຄົນໄປມາ ຫລວງຫລາຍ ທີ່ ນະຄອນຫລວງ ວຽງຈັນ. ການລັກລອບ ຈັບຕົວ ທ່ານ ສົມບັດ ຖືກ ອັດໄວ້ ໂດຍ ກ້ອງວົງໂຄຈອນ ໄກ້ໆກັບ ປ້ອມຍາມຕຳລວດ ນັ້ນ ເອງ. ອີງຕາມ ກ້ອງອັດດັ່ງກ່າວນີ້, ມີການສົງໃສ ຢ່າງແຮງວ່າ ທາງ ເຈົ້າໜ້າທີ່ ຕຳລວດໄດ້ ອັດລົດ ຂອງ ທ່ານ ສົມບັດ ແລະ ບໍ່ເທົ່າໃດ ນາທີ ຕໍ່ຈາກນັ້ນ, ບຸກຄົນກຸ່ມນຶ່ງ ໄດ້ ນຳເອົາຕົວ ທ່ານສົມບັດ ຂຶ້ນລົດຄັນນຶ່ງອີກ ພ້ອມໆກັບ ເຈົ້າໜ້າທີ່ ຕຳລວດ. ນອກນັ້ນ, ພາບອັດດັ່ງກ່າວໄດ້ ສະແດງໃຫ້ເຫັນ ອີກວ່າ ບຸກຄົນອີກຄົນນຶ່ງ ໄດ້ ນຳເອົາ ລົດ ຂອງທ່ານສົມບັດ ກັບຄືນມາ ພາຍຫລັງ ທີ່ ໄດ້ ຂັບລົດ ດັ່ງກ່າວ ຫ່າງຈາກ ຕົວເມືອງ.

ການທີ່ ເຈົ້າໜ້າທີ່ຕຳລວດ ໄດ້ຢູ່ໃນ ສະຖານະການ ການລັກລອບຕົວ ທ່ານ ສົມບັດ ແລະ ບໍ່ໄດ້ ທຳຢ່າງໃດ
ເລີຍນັ້ນ, ໄດ້ ຊໍ່ ສະແດງ ເຖິງ ການມີສ່ວນກ່ຽວຂ້ອງ ຫລືບໍ່ ກໍ່ ແມ່ນ ການສົມຮູ້ ຮ່ວມຄິດ ຂອງ ພະນັກງານ
ຂອງລັດ. ແຕ່ ເຖິງຢ່າງໃດກໍຕາມ, ທາງການ ສປປລາວ ກໍ ບໍ່ ເຄີຍ ໄດ້ ເຜີຍ ເຖິງຜົນໃໝ່ໆ ຂອງການ ສືບສວນ ນີ້ ເທື່ອ. ເຖິງແມ່ນວ່າ ທາງການ ສປປລາວ ຈະໄດ້ ປະກາດ ທີ່ ກອງປະຊຸມສາກົນ ຕ່າງໆວ່າ ການ
ສືບສວນ ກຳລັງດຳເນີນ ຢູ່ ກໍ່ຕາມ, ແຕ່ ທາງລັຖະບານ ສປປລາວ ກໍ ບໍ່ ໄດ້ ເຜີຍ ຢ່າງເປັນທາງການ ເຖິງ
ຄວາມຄືບໜ້າ ຂອງ ການສືບສວນນີ້ ນັບຕັ້ງແຕ່ ວັນທີ ໘ ມິຖຸນາ ໒໐໑໓ ເປັນຕົ້ນມາ.

ກໍຣະນີທ່ານ ສົມບັດ ບໍ່ແມ່ນກໍຣະນີດຽວ ຂອງການຫາຍສາບສູນ ແບບ ຖືກບັງຄັບໃນ ສປປລາວ.
ທາງການບໍ່ສາມາດ ເປີດເຜີຍ ເຖິງຊາຕາກັມ ຂອງຜູ້ຫາຍສາບສູນ ອັນ ຫຼວງຫຼາຍ, ພ້ອມຍັງບໍ່ໄດ້
ບອກວ່າເຂົາເຈົ້າຢູ່ໃສ ໂດຍສະເພາະ ກໍຣະນີ ຂອງ ບັນດານັກປະຊາທິປະໄຕ ຕາມເຂດທ້ອງຖິ່ນ.

ການທີ່ລັຖະບານ ສປປລາວບໍ່ສາມາດ ທຳການສືບສວນ ຢ່າງຄັກແນ່ ເຖິງ ກໍຣະນີ ຫາຍສາບສູນ
ແບບຖືກບັງຄັບນີ້, ໝາຍເຖິງ ການລະເມີດ ຂໍ້ ເງື່ອນໄຂ ຂອງ
ສົນທິສັນຍາສາກົນ ວ່າດ້ວຍ ສິດທິ
ມະນຸດ,ໂດຍສະເພາະ ມາດຕຣາ ໒(ສ) ຂອງ ສົນທິສັນຍາສາກົນ ວ່າດ້ວຍ
ສິດທິພົລະເຣືອນ, ແລະ ການເມືອງ,ຊຶ່ງທາງການ ສປປລາວ ໄດ້ລົງນາມ ແລະ
ສັດຕະຍາບັນ.

ພວກຂ້າພະເຈົ້າຈຶ່ງຮຽກຮ້ອງໃຫ້ ປະຊາຄົມສາກົນ ຈົ່ງທວງໃຫ້ ລັຖະ ບານ ສປປລາວ ເຜີຍເຖິງ ຊາຕາກັມ ຂອງ ທ່ານ ສົມບັດ ຢ່າງໂດຍດ່ວນ; ໃຫ້ ບອກວ່າ ຜູ້ກ່ຽວຖືກຈັບຕົວຢູ່ໃສ ແລະ ລາຍລະອຽດ ຂອງການ ຫາຍສາບ ສູນແບບຖືກບັງຄັບ ຂອງຜູ້ກ່ຽວ ແລະ ຜູ້ອື່ນໆອີກ. ທາງການ ສປປລາວ ຈະຕ້ອງໃຫ້ ສັນຍາ ວ່າ ທາງຄອບຄົວ ຂອງ ຜູ້ ຫາຍສາບສູນ ຈະສາມາດ ຊາບ ເຖິງ ຜົນ ຂອງການ ສືບສວນ. ນອກຈາກນັ້ນ, ທາງການລາວ ຈະຕ້ອງ ເຜີຍໃຫ້ ປວງຊົນຊາບ ເຖິງ ຄວາມຄືບໜ້າ ຂອງການ ສືບສວນ ເຖິງ ກໍຣະນີ ຫາຍສາບ ສູນນີ້ ຢ່າງ ສະມ່ຳສເມີ. ລັຖະບານ ສປປລາວ ມີໜ້າທີ່ຈະຕ້ອງ ນຳຕົວ ຜູ້ເປັນຕົ້ນເຫດ ໃນ ກໍຣະນີຫາຍສາບສູນນີ້ ຂຶ້ນຕັດສິນຄະດີ ຕາມ ເງື່ອນໄຂຂອງກົດໝາຍສາກົນ,ໂດຍ ບໍ່ຄຳນຶງເຖິງ ຖານະ ແລະ ຍົດຖາ ບັນດາສັກ ຂອງຜູ້ກໍ່ເຫດ.

ທ້າຍສຸດ, ພວກຂ້າພະເຈົ້າ ຮຽກຮ້ອງ ຢ່າງແຮງກ້າ ໃຫ້ ລັຖະບານ ສປປລາວ
ທຳ ສັດຕະຍາບັນ
ສົນທິສັນຍາສາກົນ ວ່າດ້ວຍ ການປົກປ້ອງບຸກຄົນ ຈາກການຫາຍສາບສູນ
ແບບຖືກບັງຄັບ,
ພ້ອມຍັງ ຂໍໃຫ້ ທາງການ ສປປລາວ ເພີ້ມເງື່ອນໄຂນີ້ ເຂົ້າໃນ ກົດໝ
າຍຂອງ ສປປລາວ ແລະ
ໃຫ້ມາ ປະຕິບັດ ອີກ.

1. Accion Ecologica
2. Al Haq
3. Amman Center for Human Rights Studies (ACHRS)
4. Amnesty International
5. Armanshahr/OPEN ASIA
6. ASEAN Parliamentarians for Human Rights (APHR)
7. Asian Federation Against Involuntary Disappearances (AFAD)
8. Asian Forum for Human Rights and Development (FORUM-ASIA)
9. Assistance Association for Political Prisoners (AAPP)
10. Association for Law, Human Rights and Justice (HAK)

11. Association of Human Rights Defenders and Promoters (HRDP)
12. Awaz Foundation Pakistan - Centre for Development Services
13. Bahrain Center for Human Rights (BCHR)
14. Bangladesh Environmental Lawyers Association (BELA) - Friends of the Earth Bangladesh
15. Banglar Manabadhikar Suraksha Mancha (MASUM)
16. Bank Information Center
17. Bytes for All
18. Cambodian Human Rights and Development Association (ADHOC)
19. Cambodian League for the Promotion and Defense of Human Rights (LICADHO)
20. Center for Environmental Justice (CEJ) - Friends of the Earth Sri Lanka
21. Centre for Environmental Justice
22. Centre for Financial Accountability
23. Centre for Human Rights and Development
24. Centre for Human Rights and Development (CHRD)
25. China Labour Bulletin (CLB)
26. Christian Development Alternative (CDA)
27. Citizens Against Enforced Disappearances (CAGED)
28. Coalition of the Flemish North-South Movement 11.11.11
29. Commission for the Disappeared and Victims of Violence (KontraS)
30. Community Resource Centre Foundation (CRC)
31. Covenants Watch
32. Cross Cultural Foundation (CrCF)
33. DIGNIDAD (A Life of Dignity for All)
34. Egyptian Initiative for Personal Rights
35. Empowering Singaporeans
36. ENGAGE
37. Fastenopfer Switzerland
38. FIAN International
39. FIDH – International Federation for Human Rights
40. Finnish Asiatic Society
41. Finnish League for Human Rights
42. Focus on the Global South
43. Friends of the Earth Asia Pacific
44. Friends of the Earth Australia
45. Friends of the Earth International
46. Friends of the Earth Japan
47. Fundacion Solon
48. Global Partnership for the Prevention of Armed Conflict
49. Globe International
50. GZO Peace Institute
51. Haburas Foundation- Friends of the Earth East Timor
52. Human Rights Alert
53. Human Rights Commission of Pakistan (HRCP)
54. Human Rights Defenders Forum
55. Human Rights Defenders' Alert
56. Human Rights Watch

57. Indian Social Action Forum
58. Indigenous Perspectives
59. Indonesian Legal Aid and Human Rights Association(PBHI)
60. Indonesian Legal Aid Foundation (YLBHI)
61. INFORM Human Rights Documentation Centre
62. Informal Sector Service Centre (INSEC)
63. Initiatives for International Dialogue (IID)
64. International Accountability Project
65. International Commission of Jurists
66. Internet Law Reform Dialogue (iLaw)
67. Italian League of Human Rights - LIDU
68. Jan Mitra Nyas
69. Judicial System Monitoring Program (JSMP)
70. Korean House for International Solidarity (KHIS)
71. Lao Movement for Human Rights
72. Latvian Human Rights Committee
73. League for the Defence of Human Rights in Iran (LDDHI)
74. Legal Rights and Natural Resources Center (LRC) - Friends of the Earth Philippines
75. Liga lidských Práv (LLP)
76. Ligue des droits de l'Homme (LDH)
77. Maldivian Democracy Network (MDN)
78. Mangrove Action Project
79. MARUAH
80. Mekong Monitor Tasmania
81. Mekong Watch
82. Moroccan Association for Human Rights (Association Marocaine des Droits Humains/AMDH)
83. National Commission for Justice and Peace (NCJP)
84. ND-Burma
85. NGO Forum on ADB
86. Odhikar
87. Palestinian Environmental NGOs Network (PENGON) - Friends of the Earth Palestine
88. People's Solidarity for Participatory Democracy (PSPD)
89. People's Vigilance Committee on Human Rights (PVCHR)
90. People’s Watch
91. Philippine Alliance of Human Rights Advocates (PAHRA)
92. PILIPINA Legal Resource Center (PLRC)
93. Polish Society of Antidiscrimination Law (PSAL)
94. Programme Against Custodial Torture & Impunity (PACTI)
95. Progressive Voice
96. Pusat Kumunikasi Masyarakat (Pusat KOMAS)
97. Re:Common
98. Refugee and Migratory Movements Research Unit (RMMRU)
99. #ReturnOurCPF
100. Russian Social-Ecological Union (RSEU) - Friends of the Earth Russia
101. Sahabat Alam Malaysia (SAM) - Friends of the Earth Malaysia
102. Savitri Bai Phule Women Forum

103. School for Wellbeing Studies and Research
104. Sister's Arab Forum (SAF)
105. Solidarité des Jeunes Lao
106. Sombath Initiative
107. Southeast Asia Development Program (SADP)
108. South India Cell for Human Rights Education and Monitoring (SICHREM)
109. Suan Nguen Mee Ma
110. Suara Rakyat Malaysia (SUARAM)
111. Syrian Center for Media and Freedom of Expression (SCM)
112. Taiwan Association for Human Rights (TAHR)
113. Task Force Detainees of the Philippines (TFDP)
114. The Corner House
115. Think Centre
116. Transnational Institute
117. Ulu Foundation
118. Vietnam Committee on Human Rights
119. Vietnamese Women for Human Rights
120. WomanHealth Philippines
121. World Organisation Against Torture (OMCT)
122. World Rainforest Movement